ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ນະຄອນຫລວງວຽງຈັນ, ວັນທີ: ..0.9 NOV 2020

# ໜັງສືລາຍງານ

**ຮຽນ:** ທ່ານ ຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄອງ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ ທີ່ ນັບຖື.

**ເລື່ອງ:** ຜົນສຳເລັດກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 03 ປີ 2020 ແລະ ວາງທິດທາງແຜນການປະຈຳໄຕມາດທີ 04 ປີ 2020.

- ອີງຕາມ ແຜນຈັດກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 03, 2020 ແລະ ວາງທິດທາງແຜນການ ປະຈຳໄຕມາດ ທີ 04 ປີ 2020.

ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຫ້ອງການ ຄຊກລ) ຂໍຖືເປັນກຽດຮຽນມາຍັງທ່ານເພື່ອຊາບ ກ່ຽວກັບຜົນສຳເລັດກອງປະຊຸມກຸ່ມວິຊາການ ໂຄສະນາຜົນຮ້າຍຂອງ ລບຕ ປະຈຳໄຕມາດ 3 ປີ 2020 ແລະ ວາງທິດທາງແຜນການປະຈຳໄຕມາດ ທີ 04 ປີ 2020. ກອງປະຊຸມດັ່ງກ່າວ ໄດ້ຈັດຂຶ້ນໃນ ວັນທີ .2020 ທີ່ ຫ້ອງການ ຄຊກລ ເຊິ່ງລາຍລະອຽດມີ ດັ່ງລຸ່ມນີ້ :

**1. ຈຸດປະສົງ**

- ເພື່ອລາຍງານຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຂອງແຕ່ລະ ອົງການປະຕິບັດ ປະຈຳໄຕມາດ ທີ 3 ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ສິ່ງທ້າທາຍ ແລະ ວິທີແກ້ໄຂ;
- ເພື່ອວາງທິດທາງແຜນການຈັດຕັ້ງປະຕິບັດວຽກງານການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຂອງ ແຕ່ລະ ອົງການປະຕິບັດ ປະຈຳໄຕມາດ 4 ປີ 2020.

**2. ຜູ້ເຂົ້າຮ່ວມກອງປະຊຸມ**

ກົມສົ່ງເສີມການສຶກສາ ກະຊວງສຶກສາທິການ ແລະ ກິລາ; ກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ; ກົມຂະບວນການຊາວໜຸ່ມ ສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ; ວິທະຍຸກະຈາຍສຽງແຫ່ງຊາດ; ອົງການເວີດສ໌ເອຢູເຄຊັນ (WEL); ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ; ອົງການເກັບກູ້ລະເບີດ ແມັກ ປະຈຳແຂວງຊຽງຂວາງ; ໂຄງການເກັບກູ້ລະເບີດແຫ່ງຊາດລາວ; ອົງການ Halo Trust; ແລະ ບໍລິສັດລ້ານຊ້າງມີນີໂລມ ຊີເຜີ້ງ .

**3. ການດຳເນີນກອງປະຊຸມ**

ກອງປະຊຸມໄດ້ຮັບກຽດເປັນປະທານໂດຍ ທ່ານ ດວງສີ ທຳມະວົງ ຮອງຫົວໜ້າຫ້ອງການ ຄຊກລ ເຊິ່ງກອງປະຊຸມໄດ້ດຳເນີນໄປຕາມວາລະ ດັ່ງນີ້:

ກອງປະຊຸມໄດ້ຮັບຜົນສຳເລັດຂອງກອງປະຊຸມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 02, ປີ 2020 ແລະ ຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 03, 2020 ພ້ອມດຽວກັນນີ້ກອງປະຊຸມໄດ້ຮັບຟັງລາຍງານແຜນກິດຈະກຳວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 04, 2020 ຂອງໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ. ຕໍ່ຈາກນັ້ນ, ກອງປະຊຸມກໍ່ໄດ້ຮັບຟັງກລາຍງານກ່ຽວກັບອຸປະຕິເຫດທີ່ເກີດຂຶ້ນ ໃນໄລຍະຕົ້ນປີ 2020 ມາຮອດປະຈຸບັນ ແລະ ຫລັງຈາກນັ້ນ, ຕາງໜ້າແຕ່ລະພາກສ່ວນທີ່ເຮັດວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ເປັນຕົ້ນແມ່ນ: ກົມສົ່ງເສີມການສຶກສາ ກະຊວງສຶກສາທິການ ແລະ ກິລາ, ກົມຂະບວນການຊາວໜຸ່ມ ສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ, ອົງການເວີດສ໌ເອ

ຢູເຄຊັ້ນ (WEL), ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ, ອົງການເກັບກູ້ລະເບີດ ແມັກ ປະຈຳແຂວງຊຽງຂວາງ, ວິທະຍຸກະຈາຍສຽງແຫ່ງຊາດລາວ, ໂຄງການເກັບກູ້ລະເບີດແຫ່ງຊາດລາວ, ອົງການ Halo Trust, ບໍລິສັດລ້ານຊ້າງ ມີນີໂລນ ຊີເພີ້ງ ກໍ່ໄດ້ລາຍງານຜົນສຳເລັດ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ບົດຮຽນທີ່ຖອດຖອນໄດ້ ໃນການຈັດຕັ້ງປະຕິບັດວຽກງານ ປະຈຳໄຕມາດ 03 ພ້ອມທັງວາງແຜນການປະຈຳໄຕມາດ ທີ 04.

**4. ຜົນສຳເລັດຂອງກອງປະຊຸມ**

- ກອງປະຊຸມໄດ້ຮັບຟັງການລາຍງານ ຈາກ ອົງການປະຕິບັດວຽກງານໂຄສະນາຄວາມສ່ຽງໄພ ຈາກ ລບຕ ກ່ຽວກັບ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດວຽກງານ ປະຈຳໄຕມາດ 03 ເຊິ່ງ ແຕ່ລະ ອົງການໄດ້ເຄື່ອນໄຫວກິດຈະກຳຕາມແຜນການປະຈຳໄຕມາດ 03 ໄດ້ເປັນຢ່າງດີ;
- ສຳລັບທິດທາງແຜນການປະຈຳໄຕມາດ 04, 2020 ແຕ່ລະ ອົງການປະຕິບັດ ຈະໄດ້ສືບຕໍ່ປະຕິບັດກິດຈະກຳທີ່ຍັງຄົງຄ້າງ ຂອງ ວຽກປະຈຳໄຕມາດ 03 ແລະ ວາງແຜນການຈັດຕັ້ງປະຕິບັດແຜນການປະຈຳໄຕມາດ 04 ໂດຍຈະສຸມໃສ່ປະຕິບັດກິດຈະກຳ ໃຫ້ບັນລຸຕາມແຜນການທີ່ໄດ້ວາງໄວ້ ພ້ອມທັງເອົາໃຈໃສ່ປະຕິບັດຕາມແຈ້ງການຂອງລັດຖະບານກ່ຽວກັບມາດຕະການຜ່ອນຜັນ ຂອງ ຄະນະສະເພາະກິດຄວບຄຸມການແຜ່ລະບາດພະຍາດ COVID- 19 ຢ່າງເຄັ່ງຄັດ;
- ກອງປະຊຸມໄດ້ເອກະພາບກັນຈະປັບປຸງແບບຟອມການລາຍງານກ່ຽວກັບວຽກງານການໂຄສະນາຜົນຮ້າຍ ຂອງ ລບຕ ໃຫ້ສອດຄ່ອງກັບກິດຈະກຳຂອງບັນດາອົງການປະຕິບັດ ໃນກອງປະຊຸມຄັ້ງຕໍ່ໄປ;
- ກອງປະຊຸມໄດ້ຮັບຊາບສະຖິຕິຜູ້ຖືກເຄາະຮ້າຍ ຈາກ ລບຕ ໃນໄລຍະຕົ້ນປີ 2020 ມາຮອດປະຈຸບັນມີຜູ້ຖືກເຄາະຮ້າຍຈຳນວນ 24 ຄົນ, ອຸປະຕິເຫດເກີດຂຶ້ນຫລາຍແມ່ນຢູ່ ແຂວງຊຽງຂວາງ 5 ຄັ້ງ ແລະ ຈຳນວນຜູ້ຖືກເຄາະຮ້າຍ ຫລາຍກວ່າໝູ່ແມ່ນແຂວງສະຫວັນນະເຂດ.

**5. ຂໍ້ສະເໜີ**

- ກອງປະຊຸມໄດ້ສະເໜີໃຫ້ ຫ້ອງການ ຄຊກລ ຈັດພິມປຶ້ມນະໂຍບາຍກອງທຶນປິ່ນປົວຜູ້ປະສົບເຄາະຮ້າຍ ຈາກລະເບີດບໍ່ທັນແຕກ (ລບຕ) ແລະ ໂປສເຕີ້ ເພື່ອນຳໄປແຈກຢາຍໃຫ້ບ້ານ, ພ້ອມທັງເຜີຍແຜ່ຜ່ານທາງວິທະຍຸກະຈາຍສຽງ;
- ອົງການເກັບກູ້ລະເບີດແມັກ ປະຈຳແຂວງຊຽງຂວາງ ສະເໜີໃຫ້ກອງປະຊຸມພິຈາລະນາຄືນກ່ຽວກັບການນຳໃຊ້ຄຳຊັບທີ່ສາກົນໃຊ້ໃນປະຈຸບັນແມ່ນ Explosive Ordnance Risk Education (EORE ) ແຕ່ ສປປລາວ ແມ່ນຍັງນຳໃຊ້ຄຳຊັບ Mine Risk Education (MRE);
- ກອງປະຊຸມສະເໜີ ໃຫ້ ຫ້ອງການ ຄຊກລ ພິຈາລະນາ ປັບປຸງແບບຟອມການລາຍງານກ່ຽວກັບວຽກງານການໂຄສະນາຜົນຮ້າຍ ຂອງ ລບຕ ໃຫ້ສອດຄ່ອງກັບກິດຈະກຳຂອງບັນດາອົງການປະຕິບັດ ແລະ ອົງການ WEL ສະເໜີປ້ອນຂໍ້ມູນເຂົ້າໃນລະບົບຖານຂໍ້ມູນຂອງ ຫ້ອງການ ຄຊກລ ເພື່ອລາຍງານການຈັດຕັ້ງປະຕິບັດກິດຈະກຳການໂຄສະນາຜົນຮ້າຍ ຂອງ ລບຕ ໃນແຕ່ລະໄລຍະ;
- ກອງປະຊຸມໄດ້ສະເໜີໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາກ່ຽວກັບການເຊີນ ນັກຂ່າວ ຈາກ ສະຖານີວິທະຍຸກະຈາຍສຽງແຫ່ງຊາດ ຫລື ສະຖານີວິທະຍຸກະຈາຍສຽງຂອງແຂວງ ເຂົ້າຮ່ວມ ເພື່ອເກັບກຳຂໍ້ມູນມາອອກຂ່າວໃນໄລຍະທີ່ ອົງການປະຕິບັດ ລົງຕິດຕາມຊຸກຍູ້ ແລະ ປະເມີນຜົນກິດຈະກຳ ໂຄງການ;
- ກອງປະຊຸມໄດ້ສະເໜີໃຫ້ ໜ່ວຍງານຊ່ວຍເຫລືອຜູ້ປະສົບເຄາະຮ້າຍ ແຈກຢາຍເອກະສານ ກ່ຽວກັບນະໂຍບາຍກອງທຶນປິ່ນປົວຜູ້ປະສົບເຄາະຮ້າຍ ຈາກ ລະເບີດບໍ່ທັນແຕກ (ລບຕ) ໃຫ້ບັນດາຜູ້ເຂົ້າຮ່ວມກອງປະຊຸມຄັ້ງນີ້.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມເຫັນສົມຄວນດ້ວຍ

ປະທານກອງປະຊຸມ

ຫ້ອງການ ຄຊກລ

ດວງສີ ທຳມະວົງ

ຜູ້ລາຍງານ

Khaykhamphone